ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0867 /ທຄຕລ.2024

ນະຄອນຫຼວງວຽງຈັນ, ວັນທີ: 07 NOV 2024

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ຕົວແທນຈຳໜ່າຍພາຫະນະ ພາຍໃນ ນະຄອນຫຼວງວຽງຈັນ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ພາຫະນະ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ພາຫະນະ ເພື່ອນຳໃຊ້ເຂົ້າໃນວຽກງານບໍລິການ ດັ່ງລາຍລະອຽດລຸ່ມນີ້:

| ລ/ດ | ປະເພດລົດ | ຈຳນວນ | ລາຍລະອຽດ |
|---|---|---|---|
| 1 | **ລົດຕູ້** (ຮັບໃຊ້ວຽກບໍລິການເຄື່ອນທີ່) | 1 ຄັນ | • ມາດຕະຖານເຕັກນິກຂອງເຄື່ອງຈັກ ຢູ່ໃນລະດັບມາດຕະຖານ.<br>• ຕິດ Sticker ຮອບຄັນ ຕາມ Artwork.<br>• ໂຕະເຄົ້າເຕີ້ບໍລິການ 3 ຈຸດ (ກ້ອງລຸ່ມໂຕະໂລ່ງ)<br>• ມີຊ່ອງ ຮັບເອກະສານ/ເງິນ ແລະ ມີຜ້າກັ້ງ.<br>• ຕູ້ສຳລັບໃສ່ເອກະສານ.<br>• ລະບົບປັກໄຟ ເພື່ອຈ່າຍໄຟຟ້າ ໃຫ້ພຽງພໍກັບອຸປະກອນທັງໝົດ:<br>- CCTV 1 ຊຸດ.<br>- Computer 2 ຊຸດ.<br>- Printer 4 ໜ່ວຍ.<br>- Scanner 2 ໜ່ວຍ.<br>- Router 1 ໜ່ວຍ.<br>- ຈັກກວດນັບເງິນ 1 ໜ່ວຍ.<br>- ແອ 1 ໜ່ວຍ. |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍພາຫະນະ ທີ່ມີຄວາມຕ້ອງການຍື່ນຊອງປະ ມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານ ຊອງທີ 1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບຈຳໜ່າຍພາຫະນະ, ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ພ້ອມທັງສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).
2. ກຳນົດຍື່ນຊອງລາຍລະອຽດສະເປັກລົດ, ການຮັບປະກັນສິນຄ້າ, ປີຜະລິດລົດ, ໄລຍະເວລາໃນການຈັດສົ່ງ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້ ແລະ ຍື່ນກ່ອນ **ວັນທີ 19/11/2024 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la
3. ຜູ້ສະໜອງຕ້ອງມານຳສະເໜີ ການອອກແບບພາຍໃນລົດ ໃນ ວັນພະຫັດ, ທີ 21/11/2024 ຕໍ່ຄະນະກຳມະ ການ ທຄຕລ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

❖ **<u>ເອກະສານ ຊອງທີ 2:</u> (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນມູນຄ່າເພີ່ມ ໂດຍລະບຸເປັນ 02 ສະກຸນ: ກີບ ແລະ ໂດລາ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານທຸລະກິດພາຍໃນ ສປປ ລາວ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 28/02/2025)** ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນພຸດ **ວັນທີ 27/11/2024 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ຕ້ອງມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 5/1 ອາຄານ C.

❖ **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ. ການຄັດເລືອກຜູ້ສະໜອງ ແມ່ນຈະໄດ້ຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າທີ່ຊະນະການປະມູນ.
- ພາຍຫຼັງທີ່ເຊັນສັນຍາແລ້ວ ກໍລະນີຜູ້ສະໜອງບໍ່ສາມາດສະໜອງສິນຄ້າໄດ້ຕາມສະເປັກ ຫຼື ເວລາທີ່ກຳນົດ ທຄຕລ ຈະປັບໄໝ 20% ຂອງມູນຄ່າສັນຍາທັງໝົດ.

✚ **ການຊຳລະຈະຈ່າຍເປັນງວດດຽວ 100%** ຂອງມູນຄ່າ ພາຍໃນ 20 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ແລະ ໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ພູແສງທອງ ອາ...

ຕິດຕໍ່: 021 213 200

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2023 | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ໃບອະນຸຍາດເປັນຕົວແທນ | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ/ ປີຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ 02.01.2015) | (ເລກທີ/ 02.01.2015) | (ເລກທີ/ 02.01.2015) | .... ປີ | (ໃຫ້ລະບຸ) | (ໃຫ້ລະບຸ) | - ສະເປັກ: .............<br>- ການບໍລິການຫຼັງການຂາຍ: .............<br>- ເງື່ອນໄຂ: ............. | ປະເທດ....... | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: